ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມຈັດຕັ້ງ ແລະ ພະນັກງານ

ວິທະຍາໄລຊົນລະປະທານ ທ່າງ່ອນ

ເລກທີ 0449 /ວຊປທ.

ນະຄອນຫຼວງວຽງຈັນ, ວັນທີ 06.05.2025

# ໜັງສືແຈ້ງເຊີນປະມູນ

1. ວິທະຍາໄລຊົນລະປະທານ ທ່າງ່ອນ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນວຸດທິເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບສະໜອງ ອຸປະກອນເຄື່ອງມືສຳຫຼວດພູມສາດ ປະກອບດ້ວຍ: 1) ເຄື່ອງຮັບສັນຍານ Base GNSS GPS RTK ຈຳນວນ 1 ຊຸດ, 2) ເຄື່ອງອ່ານຄ່າ ບັນທຶກ Rover GNSS GPS RTK ຈຳນວນ 2 ຊຸດ. ໄລຍະການຈັດສົ່ງແມ່ນ 30 ວັນ ພາຍຫຼັງທີ່ໄດ້ເຊັນສັນຍາ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ໃນ ກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ແມ່ນເປີດກວ້າງໃຫ້ທຸກໆບໍລິສັດ ຂອງນິຕິບຸກຄົນພາຍໃນ ທີ່ດຳເນີນທຸລະກິດຢູ່ ໃນ ສປປ ລາວ, ມີໃບທະບຽນວິສາຫະກິດ, ມີເລກປະຈຳຕົວເສຍອາກອນ ແລະ ໃບຢັ້ງຢືນການປະຕິບັດພັນທະພາສີ, ອາກອນ ຖືກຕ້ອງຕາມກົດໝາຍ;
4. ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ວິທະຍາໄລຊົນລະປະທານ ທ່າງ່ອນ (ຕິດຕໍ່ທາງໂທລະສັບ 020 22 426 944, 020 55 985 865) ໃນໂມງລັດຖະການ 8:00-12:00 ແລະ 13:30-16:00 ໂມງ. ວິທະຍາໄລຊົນລະປະທານ ທ່າງ່ອນ ມີສຳນັກງານຕັ້ງຢູ່ບ້ານ ພູຄຳ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ;
5. ເອກະສານຄົບຊຸດທີ່ເປັນພາສາລາວ ສາມາດຊື້ໄດ້ໂດຍຜູ້ປະມູນທີ່ສົນໃຈ ໂດຍການຍື່ນໜັງສືສະເໜີຫາ ວິທະຍາໄລຊົນລະປະທານ ທ່າງ່ອນ, **ນັບແຕ່ວັນທີ 6 ພຶດສະພາ 2025 ຫາ 11 ມິຖຸນາ 2025** ໃນລາຄາຊອງປະມູນ ຊອງລະ 500,000 ກີບ (ຫ້າແສນກີບຖ້ວນ) ເງິນຈຳນວນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ. ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນ ຕ້ອງສົ່ງທີ່ວິທະຍາໄລຊົນລະປະທານ ທ່າງ່ອນ , ບ້ານ ພູຄຳ, ເມືອງ ໄຊທານີ, ນະຄອນຫຼວງວຽງຈັນ ໃນເວລາ ຫຼື ກ່ອນເວລາ **14:00** ໂມງ ຂອງວັນທີ **11 ມິຖຸນາ 2025.** ຊອງປະມູນທີ່ສົ່ງທາງເອເລັກໂທນິກຈະບໍ່ອະນຸຍາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ທຸກໆຊອງປະມູນຈະໄດ້ເປີດໃນເວລາ **14:00** ໂມງ ຂອງວັນທີ **11 ມິຖຸນາ 2025** ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ;
7. ທຸກໆຊອງປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນ ການປະມູນດ້ວຍກຽດ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫຼຸດ 2% (ສອງສ່ວນຮ້ອຍ) ຂອງລາຄາປະມູນ ມາພ້ອມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຊາບ ແລະ ເຂົ້າຮ່ວມການປະມູນ ໃນຄັ້ງນີ້ດ້ວຍ.

**ອຳນວຍການ**

ກະຊວງກະສິກຳ ແລະ ປ່າໄມ້ ວິທະຍາໄລຊົນລະປະທານ ທ່າງ່ອນ ກົມຈັດຕັ້ງ ແລະ ພະນັກງານ

ປທ ອານຸສອນ ຄຸນສົມບັດ